ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---------------------------

ເລກທີ **44/**ສປປ

# ລັດຖະດຳລັດ

# ຂອງປະທານປະເທດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ**
**ການແກ້ໄຂຂໍ້ຂັດແຍ່ງ ທາງດ້ານເສດຖະກິດ**

--------------------------------

- ອີງຕາມລັດຖະທຳມະນູນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI, ມາດຕາ 67,ຂໍ້ 1 ກ່ຽວກັບການປະກາດໃຊ້ລັດຖະທຳມະນູນ ແລະກົດໝາຍ ທີ່ສະພາແຫ່ງຊາດ ໄດ້ຕົກລົງຮັບຮອງເອົາແລ້ວ.
- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 25/ສພຊ, ລົງວັນທີ 20 ພຶດສະພາ 2005 ກ່ຽວກັບການຮັບ ຮອງເອົາກົດໝາຍວ່າດ້ວຍການການແກ້ໄຂຂໍ້ຂັດແຍ້ງທາງດ້ານເສດຖະກິດ;
- ອີງຕາມໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 06/ຄປຈ, ລົງວັນທີ 23 ພຶດສະພາ 2005.

ປະທານປະເທດ
ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

***ມາດຕາ1:*** ປະກາດໃຊ້ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ້ງທາງດ້ານເສດຖະກິດ.
***ມາດຕາ2:*** ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 25 ພຶດສະພາ 2005
ປະທານປະເທດ ແຫ່ງ ສປປ ລາວ

ເຊັນ ແລະປະທັບຕາ

ຄຳໄຕ ສີພັນດອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
*********************

ສະພາແຫ່ງຊາດ ເລກທີ 02 /ສພຊ

ນະຄອນຫຼວງວຽງຈັນ, ວັນທ19 ພຶດສະພາ 2005

# ກົດໝາຍ
# ວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ກົດໝາຍ ວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ກຳນົດຫຼັກການ, ລະບຽບການ ແລະມາດຕະການກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໂດຍຜູ້ໄກ່ເກ່ຍ ຫຼື ໂດຍຄະນະກຳມະການຕັດສິນ ແນໃສ່ເຮັດໃຫ້ການຂັດແຍ່ງທາງດ້ານເສດຖະກິດໄດ້ຮັບການແກ້ໄຂຢ່າງເປັນທຳ, ວ່ອງໄວ ເພື່ອຊຸກຍູ້ການຜະລິດ ແລະການດຳເນີນທຸລະກິດໃຫ້ມີການຂະຫຍາຍຕົວ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງປະເທດ ໃຫ້ຈະເລີນຮຸ່ງເຮືອງ, ສີວິໄລ ແລະຍຸຕິທຳ.

### ມາດຕາ 2. ຂໍ້ຂັດແຍ່ງທາງດ້ານເສດຖະກິດ

ຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນຂໍ້ຜິດພາດທີ່ເກີດຂຶ້ນ ກ່ຽວກັບການຜະລິດ ແລະການດຳເນີນທຸລະກິດ ລະຫວ່າງການຈັດຕັ້ງກັບການຈັດຕັ້ງ, ການຈັດຕັ້ງກັບບຸກຄົນ, ບຸກຄົນກັບບຸກຄົນ ທັງພາຍໃນ ແລະຕ່າງປະເທດ.

### ມາດຕາ 3. ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈະໄດ້ຮັບການແກ້ໄຂດ້ວຍການປະນີປະນອມກັນ ລະຫວ່າງຄູ່ຄວາມ, ດ້ວຍການໄກ່ເກ່ຍ, ດ້ວຍການຕັດສິນ ໂດຍຄະນະກຳມະການຕັດສິນຂໍ້ຂັດແຍ່ງທາງດ້ານເສດຖະກິດ.

ການດຳເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນອີງໃສ່ກົດໝາຍສະບັບນີ້, ລະບຽບກົດໝາຍອື່ນໆ ຂອງ ສປປ ລາວ ແລະລະບຽບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດທີ່ຄູ່ຄວາມຕົກລົງເລືອກເອົາ ໂດຍສອດຄ່ອງກັບສັນຍາ ແລະສົນທິສັນຍາທີ່ ສປປ ລາວໄດ້ເຊັນ ຫຼືເຂົ້າຮ່ວມເປັນພາຄີ.

**ມາດຕາ 4. ເງື່ອນໄຂຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ການແກ້ໄຂຂໍ້ຂັດແຍ່ງຕ້ອງດຳເນີນຕາມເງື່ອນໄຂດັ່ງຕໍ່ໄປນີ້:

- ເປັນຂໍ້ຂັດແຍ່ງທາງດ້ານເສດຖະກິດ;
- ໄດ້ຮັບຄວາມເຫັນດີຂອງຄູ່ຄວາມ;
- ບໍ່ແມ່ນຂໍ້ຂັດແຍ່ງທາງດ້ານເສດຖະກິດທີ່ສານປະຊາຊົນພວມດຳເນີນຄະດີ ຫຼື ຕັດສິນໃຊ້ໄດ້ຢ່າງເດັດຂາດແລ້ວ;
- ຖືກຕ້ອງຕາມສະພາບຄວາມເປັນຈິງ, ບໍ່ໃຫ້ລະເມີດລະບຽບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ລະບຽບກົດໝາຍກ່ຽວກັບຄວາມໝັ້ນຄົງ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

**ມາດຕາ 5. ຄວາມເປັນເອກະລາດໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຜູ້ໄກ່ເກ່ຍ ຫຼືຄະນະກຳມະການຕັດສິນຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງປະຕິບັດໜ້າທີ່ຂອງຕົນຢ່າງເປັນເອກະລາດ ພາຍໃຕ້ລະບຽບກົດໝາຍ, ປາສະຈາກການແຊກແຊງຈາກບຸກຄົນ ຫຼືຈາກການຈັດຕັ້ງອື່ນ.

**ມາດຕາ 6. ຄວາມສະເໝີພາບຂອງຄູ່ຄວາມ**

ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຄູ່ຄວາມແຕ່ລະຝ່າຍມີສິດເທົ່າທຽມກັນ, ຄູ່ຄວາມມີສິດເຂົ້າຮ່ວມດ້ວຍຕົນເອງ ຫຼືໃຫ້ຜູ້ຕາງໜ້າຂອງຕົນທີ່ໄດ້ຮັບການມອບໝາຍເຂົ້າຮ່ວມແທນກໍໄດ້.

**ມາດຕາ 7. ການຮັບປະກັນຄວາມລັບ**

ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຜູ້ໄກ່ເກ່ຍ ຫຼືຄະນະກຳມະການຕັດສິນ, ຄູ່ຄວາມ ແລະຜູ້ເຂົ້າຮ່ວມອື່ນໆ ຕ້ອງຮັກສາເປັນຄວາມລັບ ກ່ຽວກັບຂໍ້ມູນ ແລະເອກະສານຕ່າງໆທີ່ໄດ້ນຳສະເໜີໃນເວລາໄກ່ເກ່ຍ ຫຼື ເວລາຕັດສິນຂໍ້ຂັດແຍ່ງນັ້ນ, ຫ້າມເປີດເຜີຍຕໍ່ບຸກຄົນພາຍ ນອກ.

**ມາດຕາ 8. ພາສາທີ່ນຳໃຊ້**

ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຢູ່ ສປປ ລາວ ຕ້ອງໃຊ້ພາສາລາວ. ຜູ້ເຂົ້າຮ່ວມໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ທີ່ບໍ່ຮູ້ພາສາລາວ ມີສິດໃຊ້ພາສາຕົນເອງ ຫຼື ພາສາອື່ນ ໂດຍຜ່ານການແປພາສາ.

**ມາດຕາ 9. ການພົວພັນສາກົນ**

ລັດສົ່ງເສີມການພົວພັນຮ່ວມມືສາກົນ ກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ດ້ວຍການປະສານວຽກງານ, ແລກປ່ຽນບົດຮຽນ, ຍົກລະດັບຄວາມຮູ້, ຄວາມສາມາດໃຫ້ບຸກຄະລາກອນ ຂອງການຈັດຕັ້ງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໂດຍສອດຄ່ອງກັບສັນຍາ ຫຼື ສົນທິສັນຍາທີ່ ສປປ ລາວ ໄດ້ເຊັນ ຫຼື ເຂົ້າຮ່ວມເປັນພາຄີ ເພື່ອເຮັດໃຫ້ວຽກງານດັ່ງກ່າວມີປະສິດທິຜົນ.

## ພາກທີ II
## ການຈັດຕັ້ງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

**ມາດຕາ 10. ທີ່ຕັ້ງ ແລະພາລະບົດບາດ**

ການຈັດຕັ້ງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນພາກສ່ວນໜຶ່ງທີ່ສັງກັດຢູ່ຂະແໜງການຍຸຕິທຳ ຊຶ່ງມີພາລະບົດບາດຄຸ້ມຄອງ ແລະອຳນວຍຄວາມສະດວກໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃຫ້ຖືກຕ້ອງ, ວ່ອງໄວ ແລະຍຸຕິທຳ.

**ມາດຕາ 11. ລະບົບການຈັດຕັ້ງ**

ລະບົບການຈັດຕັ້ງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ປະກອບດ້ວຍສອງຂັ້ນ:

- ຂັ້ນສູນກາງ;
- ຂັ້ນແຂວງ.

ຢູ່ຂັ້ນສູນກາງ ມີສຳນັກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເອີ້ນຫຍໍ້ວ່າ " ສກສ ", ມີຖານະທຽບເທົ່າກົມ ແລະຂຶ້ນກັບກະຊວງຍຸຕິທຳ;

ຢູ່ຂັ້ນແຂວງ ບ່ອນມີຄວາມຈຳເປັນ ມີຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເອີ້ນຫຍໍ້ວ່າ " ຫກສ ", ຊຶ່ງຫົວໜ້າມີຖານະທຽບເທົ່າກັບຮອງຫົວໜ້າພະແນກຂອງແຂວງ ແລະຂຶ້ນກັບພະແນກຍຸຕິທຳ.

ລະບຽບການກ່ຽວກັບການຈັດຕັ້ງ ແລະການເຄື່ອນໄຫວຂອງ ສກສ ແລະ ຫກສ ໄດ້ກຳນົດໄວ້ຕ່າງຫາກ.

**ມາດຕາ 12. ໂຄງປະກອບບຸກຄະລາກອນ**

- ສກສ ມີຫົວໜ້າ, ຮອງຫົວໜ້າ ສກສ ແລະພະນັກງານວິຊາການ, ບໍລິຫານຈຳນວນໜຶ່ງ.
- ຫກສ ມີຫົວໜ້າ, ຮອງຫົວໜ້າ ຫກສ ແລະພະນັກງານວິຊາການ, ບໍລິຫານຈຳນວນໜຶ່ງ.

**ມາດຕາ 13. ສິດຂອງ ສກສ**

ສກສ ມີສິດດັ່ງລຸ່ມນີ້:

1. ຄຸ້ມຄອງ ແລະອຳນວຍຄວາມສະດວກ ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃນຂອບເຂດທົ່ວປະເທດໃຫ້ຖືກຕ້ອງ, ວ່ອງໄວ ແລະຍຸຕິທຳ;

2. ຮັບເອົາຄຳຮ້ອງແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອມາກວດກາ ແລະພິຈາລະນາ ແລ້ວມອບໃຫ້ຜູ້ໄກ່ເກ່ຍ ຫຼືກຳມະການຕັດສິນແກ້ໄຂ ຖ້າວ່າຄຳຮ້ອງດັ່ງກ່າວຫາກຖືກຕ້ອງຕາມເງື່ອນໄຂ;
3. ທວງເອົາຂໍ້ມູນຫຼັກຖານຈາກຄູ່ຄວາມ;
4. ສະເໜີລັດຖະມົນຕີວ່າການກະຊວງຍຸຕິທຳແຕ່ງຕັ້ງຜູ້ໄກ່ເກ່ຍ ຫຼື ກຳມະການຕັດສິນເຂົ້າໃນບັນຊີລາຍຊື່ເປັນຜູ້ໄກ່ເກ່ຍ ຫຼືກຳມະການຕັດສິນຂອງ ສກສ; ສະເໜີປົດຜູ້ໄກ່ເກ່ຍ ຫຼືກຳມະການຕັດສິນຜູ້ທີ່ປະຕິບັດໜ້າທີ່ບໍ່ເໝາະສົມ;
5. ແຕ່ງຕັ້ງຜູ້ໄກ່ເກ່ຍ ຫຼືຄະນະກຳມະການຕັດສິນ ເພື່ອແກ້ໄຂຂໍ້ຂັດແຍ່ງໃດໜຶ່ງ;
6. ປະຕິບັດສິດອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

ສຳລັບ ຫກສ ກໍມີສິດເຊັ່ນດຽວກັນກັບ ສກສ ຍົກເວັ້ນຂໍ້ 4 ຂອງມາດຕານີ້.

### ມາດຕາ 14. ໜ້າທີ່ຂອງ ສກສ

ສກສ ມີໜ້າທີ່ດັ່ງລຸ່ມນີ້:

1. ປະສານງານກັບຄູ່ຄວາມ ແລະພາກສ່ວນກ່ຽວຂ້ອງ ເພື່ອໃຫ້ຜູ້ໄກ່ເກ່ຍ ຫຼື ຄະນະກຳມະການຕັດສິນ ດຳເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
2. ຕິດຕາມ, ເກັບກຳຜົນຂອງການຈັດຕັ້ງປະຕິບັດຄຳຕົກລົງຂອງການໄກ່ເກ່ຍ, ຄຳຕົກລົງຂອງຄູ່ຄວາມ ແລະຄຳຕັດສິນຂອງຄະນະກຳມະການຕັດສິນຂໍ້ຂັດແຍ່ງທາງດ້ານເສດຖະກິດ;
3. ອອກແບບພິມເອກະສານ ແລະລະບຽບການກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ຄົ້ນຄວ້າ, ປັບປຸງລະບຽບກົດໝາຍກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອສະເໜີໃຫ້ຂັ້ນເທິງພິຈາລະນາ;
5. ຄົ້ນຄວ້າສະເໜີຕໍ່ກະຊວງຍຸຕິທຳກ່ຽວກັບການກໍ່ສ້າງ, ບຳລຸງ ແລະຍົກລະດັບວິຊາການຂອງ ສກສ ແລະ ຫກສ;
6. ໂຄສະນາ, ເຜີຍແຜ່ ລະບຽບກົດໝາຍ ແລະວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
7. ພົວພັນ, ຮ່ວມມືກັບສາກົນກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
8. ສະຫຼຸບ, ປະເມີນຜົນ ແລະລາຍງານການເຄື່ອນໄຫວວຽກງານຂອງຕົນ ໃຫ້ກະຊວງຍຸຕິທຳ;
9. ປະຕິບັດໜ້າທີ່ອື່ນໆ ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍ.

ສຳລັບ ຫກສ ກໍມີໜ້າທີ່ເຊັ່ນດຽວກັນກັບ ສກສ ຍົກເວັ້ນຂໍ້ 3 ແລະຂໍ້ 7 ຂອງມາດຕານີ້.

### ມາດຕາ 15. ປະເພດການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີສອງປະເພດຄື: ການແກ້ໄຂໂດຍຜູ້ໄກ່ເກ່ຍ ແລະການແກ້ໄຂໂດຍຄະນະກຳມະການຕັດສິນ.

**ມາດຕາ 16. ຜູ້ໄກ່ເກ່ຍ ແລະກຳມະການຕັດສິນ**

ຜູ້ໄກ່ເກ່ຍ ແລະກຳມະການຕັດສິນ ແມ່ນບຸກຄົນທີ່ມາຈາກສຳນັກງານ, ອົງການ, ຫົວໜ່ວຍທຸລະກິດພາກລັດ ແລະເອກະຊົນ ຫຼື ຄົນຕ່າງປະເທດທີ່ມີຄວາມສະໝັກໃຈ ແລະໄດ້ຮັບການແຕ່ງຕັ້ງຈາກລັດຖະມົນຕີວ່າການກະຊວງຍຸຕິທຳ ຕາມການຄັດເລືອກ ແລະສະເໜີຂອງ ສກສ.

**ມາດຕາ 17. ມາດຕະຖານຜູ້ໄກ່ເກ່ຍ ແລະກຳມະການຕັດສິນ**

ຜູ້ໄກ່ເກ່ຍ ແລະກຳມະການຕັດສິນ ຕ້ອງມີມາດຕະຖານດັ່ງນີ້:

1. ມີຄຸນສົມບັດ, ມີຈັນຍາທຳ ແລະບໍລິສຸດສັດຊື່;
2. ມີຄວາມຮູ້ຄວາມສາມາດທາງດ້ານວິຊາສະເພາະໃດໜຶ່ງ ໂດຍມີໃບຢັ້ງຢືນຢ່າງຖືກຕ້ອງ;
3. ໄດ້ຜ່ານວຽກທີ່ຕົນໄດ້ຮຽນມາ ແລະມີປະສົບປະການ ຢ່າງໜ້ອຍຫ້າປີ;
4. ບໍ່ເຄີຍຖືກສານຕັດສິນລົງໂທດຕັດອິດສະຫຼະພາບມາກ່ອນ;
5. ມີສຸຂະພາບແຂງແຮງດີ.

## ພາກທີ III
## ຂັ້ນຕອນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

### ໝວດທີ 1
### ຄຳຮ້ອງ

**ມາດຕາ 18. ເນື້ອໃນຄຳຮ້ອງ**

ຄຳຮ້ອງຕ້ອງເຮັດເປັນລາຍລັກອັກສອນ ແລະມີເນື້ອໃນຕົ້ນຕໍດັ່ງລຸ່ມນີ້:

1. ຊື່ ແລະນາມສະກຸນ, ອາຍຸ, ອາຊີບ, ສັນຊາດ, ທີ່ຢູ່, ສະຖານທີ່ຕັ້ງກິດຈະການ ຂອງຜູ້ຮ້ອງຂໍ, ຜູ້ຕາງໜ້າ ແລະຂອງຄູ່ຄວາມອີກຝ່າຍໜຶ່ງ;
2. ຈຸດປະສົງ, ສາເຫດ, ມູນຄ່າຂອງຂໍ້ຂັດແຍ່ງ;
3. ຄຳຕົກລົງຂອງຄູ່ຄວາມໃຫ້ນຳຂໍ້ຂັດແຍ່ງດັ່ງກ່າວມາແກ້ໄຂຢູ່ ສກສ ຫຼື ຫກສ ( ຖ້າມີ );
4. ຊື່ ແລະນາມສະກຸນ, ອາຍຸ, ອາຊີບ, ສັນຊາດ ແລະທີ່ຢູ່ຂອງພະຍານ.

ຄຳຮ້ອງຂໍ ເພື່ອແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃຫ້ຕິດສະແຕັມອາກອນ ຕາມລະບຽບການ ແລະໃຫ້ຍື່ນຕໍ່ ສກສ ຫຼື ຫກສ ບ່ອນທີ່ຕົນເຫັນວ່າມີຄວາມສະດວກ.

**ມາດຕາ 19. ການຮັບຄຳຮ້ອງ**

ສກສ ຫຼື ທກສ ຈະຮັບເອົາຄຳຮ້ອງກ່ຽວກັບຂໍ້ຂັດແຍ່ງທາງດ້ານເສດຖະກິດມາແກ້ໄຂໄດ້ ກໍຕໍ່ເມື່ອ ຄູ່ຄວາມຫາກໄດ້ກຳນົດໄວ້ໃນສັນຍາກ່ອນແລ້ວ ວ່າຈະນຳຂໍ້ຂັດແຍ່ງຂອງຕົນມາແກ້ໄຂ ຢູ່ ສກສ ຫຼື ທກສ.

ໃນກໍລະນີທີ່ບໍ່ໄດ້ກຳນົດໄວ້ໃນສັນຍາ ຄູ່ຄວາມສາມາດຕົກລົງກັນໃຫ້ ສກສ ຫຼື ທກສ ແກ້ໄຂໃຫ້ ພາຍຫຼັງທີ່ຂໍ້ຂັດແຍ່ງໄດ້ເກີດຂຶ້ນ.

ພາຍຫຼັງທີ່ໄດ້ຮັບຄຳຮ້ອງແລ້ວ ສກສ ຫຼື ທກສ ຕ້ອງກວດກາເບິ່ງສຳນວນຄຳຮ້ອງ ເພື່ອລົງຄວາມເຫັນວ່າຈະຮັບເອົາ ຫຼືບໍ່ຮັບເອົາຄຳຮ້ອງດັ່ງກ່າວມາພິຈາລະນາແກ້ໄຂ. ຖ້າບໍ່ຮັບເອົາມາພິຈາລະນາແກ້ໄຂ ສກສ ຫຼື ທກສ ຕ້ອງແຈ້ງໃຫ້ຜູ້ຍື່ນຄຳຮ້ອງຊາບ ພ້ອມດ້ວຍເຫດຜົນ ພາຍໃນກຳນົດສິບວັນ ນັບແຕ່ວັນທີ່ ໄດ້ຮັບຄຳຮ້ອງເປັນຕົ້ນໄປ.

ໃນກໍລະນີທີ່ຮັບເອົາ ກໍໃຫ້ ສກສ ຫຼື ທກສ ເຊີນເອົາຄູ່ຄວາມທັງໝົດເຂົ້າມາ ເພື່ອດຳເນີນການແກ້ໄຂຕໍ່ໄປ. ຖ້າວ່າຄູ່ຄວາມຝ່າຍໃດຝ່າຍໜຶ່ງ ຫຼື ທັງໝົດຫາກບໍ່ມາຕາມໝາຍເຊີນ ໂດຍບໍ່ມີເຫດຜົນ ຫຼື ໃນກໍລະນີທີ່ຄຳຮ້ອງຫາກບໍ່ຖືກຕ້ອງຕາມເງື່ອນໄຂ ທີ່ໄດ້ກຳນົດໄວ້ໃນມາດຕາ 4 ແລະ ມາດຕາ 18 ຂອງກົດໝາຍສະບັບນີ້ ຄຳຮ້ອງດັ່ງກ່າວກໍຈະບໍ່ໄດ້ຮັບການພິຈາລະນາ.

**ມາດຕາ 20. ການເລືອກວິທີການແກ້ໄຂ**

ເມື່ອ ສກສ ຫຼື ທກສ ຕົກລົງຮັບເອົາຄຳຮ້ອງ ເພື່ອແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດມາພິຈາລະນາແລ້ວ ກໍຕ້ອງເຊີນຄູ່ຄວາມມາປຶກສາຫາລື ເພື່ອຕົກລົງວ່າຈະເລືອກເອົາການແກ້ໄຂຂໍ້ຂັດແຍ່ງ ດ້ວຍການໄກ່ເກ່ຍ ຫຼື ດ້ວຍການຕັດສິນໂດຍຄະນະກຳມະການ.

## ໝວດທີ 2
## ການໄກ່ເກ່ຍ

**ມາດຕາ 21. ການແຕ່ງຕັ້ງຜູ້ໄກ່ເກ່ຍ**

ການແຕ່ງຕັ້ງຜູ້ໄກ່ເກ່ຍຕ້ອງເປັນຈຳນວນຄີກຢູ່ສະເໝີ. ຜູ້ໄກ່ເກ່ຍອາດຈະມີໜຶ່ງຄົນ ຫຼື ຫຼາຍຄົນ ໂດຍອີງຕາມການຕົກລົງເຫັນດີຂອງຄູ່ຄວາມ.

ໃນກໍລະນີທີ່ຄູ່ຄວາມຕົກລົງເຫັນດີເອົາຜູ້ໄກ່ເກ່ຍໜຶ່ງຄົນນັ້ນ ໃຫ້ ສກສ ຫຼື ທກສ ເປັນຜູ້ສະເໜີບັນຊີລາຍຊື່ຜູ້ໄກ່ເກ່ຍຢ່າງໜ້ອຍສາມຄົນ ໃຫ້ຄູ່ຄວາມແຕ່ລະຝ່າຍເລືອກ. ຫຼັງຈາກນັ້ນໃຫ້ຄູ່ຄວາມທັງໝົດ ຕົກລົງເຫັນດີເປັນເອກະພາບເລືອກເອົາຜູ້ໄກ່ເກ່ຍໜຶ່ງຄົນ ໃນບັນຊີລາຍຊື່ນັ້ນ, ຖ້າເລືອກບໍ່ໄດ້ພາຍໃນກຳນົດເວລາສິບຫ້າວັນແລ້ວ ສກສ ຫຼື ທກສ ຈະເລືອກເອົາຜູ້ໄກ່ເກ່ຍໃຫ້ ໂດຍອີງໃສ່ ຄວາມຮູ້, ຄວາມສາມາດ, ປະສົບການ ແລະຄວາມທ່ຽງທຳຂອງຜູ້ໄກ່ເກ່ຍ.

ໃນກໍລະນີທີ່ຄູ່ຄວາມຕົກລົງເຫັນດີເລືອກເອົາຜູ້ໄກ່ເກ່ຍສາມຄົນນັ້ນ ໃຫ້ ສກສ ຫຼື ທກສ ເປັນຜູ້ສະເໜີບັນຊີລາຍຊື່ຜູ້ໄກ່ເກ່ຍຢ່າງໜ້ອຍຫ້າຄົນ ໃຫ້ຄູ່ຄວາມແຕ່ລະຝ່າຍເລືອກເອົາຜູ້ໄກ່ເກ່ຍ ຂອງຕົນຝ່າຍລະໜຶ່ງຄົນ. ຫຼັງຈາກນັ້ນ ໃຫ້ຜູ້ໄກ່ເກ່ຍທັງສອງຄົນທີ່ຖືກເລືອກນັ້ນ ເລືອກເອົາຜູ້ໄກ່ເກ່ຍອີກໜຶ່ງຄົນ ຈາກບັນຊີລາຍຊື່ຜູ້ໄກ່ເກ່ຍທັງໝົດ ມາເປັນປະທານຄະນະກຳມະການໄກ່ເກ່ຍ.

ຖ້າຄູ່ຄວາມຝ່າຍໃດຝ່າຍໜຶ່ງ ຫຼືທັງໝົດ ຫາກເລືອກເອົາຜູ້ໄກ່ເກ່ຍບໍ່ໄດ້ ຫຼືເລືອກບໍ່ທັນພາຍໃນກຳນົດ ສິບຫ້າວັນ ນັບແຕ່ວັນ ສກສ ຫຼື ຫກສ ໄດ້ສະເໜີໃຫ້ຄູ່ຄວາມເລືອກຜູ້ໄກ່ເກ່ຍເປັນຕົ້ນໄປ ຫຼືຖ້າຜູ້ໄກ່ເກ່ຍທັງສອງຄົນທີ່ຖືກເລືອກໄດ້ແລ້ວ ແຕ່ຫາກເລືອກເອົາຜູ້ທີສາມບໍ່ໄດ້ ຫຼືເລືອກບໍ່ທັນພາຍໃນກຳນົດເວລາສິບຫ້າວັນ ນັບແຕ່ວັນທີ່ໄດ້ຖືກຄັດເລືອກເປັນຕົ້ນໄປນັ້ນ ສກສ ຫຼື ຫກສ ຈະເປັນຜູ້ເລືອກໃຫ້.

ໃນກໍລະນີທີ່ຄູ່ຄວາມຕົກລົງເຫັນດີເລືອກເອົາຜູ້ໄກ່ເກ່ຍຫຼາຍກວ່າສາມຄົນນັ້ນ ໃຫ້ປະຕິບັດຕາມຫຼັກການທີ່ໄດ້ກຳນົດໄວ້ໃນວັກເທິງນີ້.

ການແຕ່ງຕັ້ງຜູ້ໄກ່ເກ່ຍບໍ່ວ່າຢູ່ໃນກໍລະນີໃດກໍຕາມ ຕ້ອງໄດ້ຮັບຄວາມເຫັນດີເປັນລາຍລັກອັກສອນ ຈາກຜູ້ໄກ່ເກ່ຍ ແລະຄູ່ຄວາມເສັຍກ່ອນ.

ສກສ ຫຼື ຫກສ ຈະແຕ່ງຕັ້ງຜູ້ໄກ່ເກ່ຍ ພາຍໃນເຈັດວັນ ນັບແຕ່ວັນໄດ້ຮັບບັນຊີລາຍຊື່ຜູ້ໄກ່ເກ່ຍທີ່ຄູ່ຄວາມສະເໜີໃຫ້ແຕ່ງຕັ້ງ.

## ມາດຕາ 22. ການຖອນຕົວ ແລະການຄ້ານຕົວຜູ້ໄກ່ເກ່ຍ

ຄູ່ຄວາມມີສິດຄ້ານຕົວຜູ້ໄກ່ເກ່ຍ, ຜູ້ໄກ່ເກ່ຍເອງ ກໍມີສິດຖອນຕົວອອກຈາກການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດເຊັ່ນດຽວກັນ ຖ້າເຫັນວ່າຕົນເປັນຍາດພີ່ນ້ອງ ຫຼືມີການພົວພັນກັບຜົນປະໂຫຍດ ຫຼືມີຂໍ້ຂັດແຍ່ງກັບຄູ່ຄວາມຝ່າຍໃດຝ່າຍໜຶ່ງ.

ໃນກໍລະນີຜູ້ໄກ່ເກ່ຍທີ່ໄດ້ຮັບການແຕ່ງຕັ້ງນັ້ນຫາກຖອນຕົວ ຫຼື ຖືກຄ້ານຕົວ ຫຼື ບໍ່ສາມາດປະຕິບັດໜ້າທີ່ໄດ້ນັ້ນ ກໍໃຫ້ດຳເນີນການເລືອກ ແລະແຕ່ງຕັ້ງຜູ້ໄກ່ເກ່ຍຄົນໃໝ່ແທນ. ການເລືອກເອົາຜູ້ໄກ່ເກ່ຍຄົນໃໝ່ແທນກໍໃຫ້ປະຕິບັດຕາມມາດຕາ 21 ຂອງກົດໝາຍສະບັບນີ້.

## ມາດຕາ 23. ການດຳເນີນການໄກ່ເກ່ຍ

ການໄກ່ເກ່ຍຕ້ອງດຳເນີນພາຍໃນສິບຫ້າວັນນັບແຕ່ວັນແຕ່ງຕັ້ງຜູ້ໄກ່ເກ່ຍເປັນຕົ້ນໄປ. ການໄກ່ເກ່ຍ ຕ້ອງດຳເນີນໂດຍຊ້ອງໜ້າຄູ່ຄວາມ ຫຼືຜູ້ຕາງໜ້າທີ່ໄດ້ຮັບການມອບໝາຍ.

ຄູ່ຄວາມມີສິດສະເໜີບັນຫາ, ຂໍ້ມູນ, ຫຼັກຖານຕ່າງໆກ່ຽວກັບຂໍ້ຂັດແຍ່ງຕໍ່ຜູ້ໄກ່ເກ່ຍ ແລະຕໍ່ຄູ່ກໍລະນີໄດ້ຕະຫຼອດເວລາຂອງການໄກ່ເກ່ຍ.

ຜູ້ໄກ່ເກ່ຍມີສິດສະເໜີ ວິທີທາງອອກໃຫ້ຄູ່ຄວາມຕະຫຼອດເວລາຂອງການໄກ່ເກ່ຍ.

ການໄກ່ເກ່ຍແຕ່ລະຄັ້ງ ຕ້ອງເຮັດບົດບັນທຶກເປັນລາຍລັກອັກສອນ ຊຶ່ງເນື້ອໃນຕົ້ນຕໍຂອງບົດບັນທຶກນັ້ນ ໄດ້ກຳນົດໄວ້ໃນມາດຕາ 26 ຂອງກົດໝາຍສະບັບນີ້.

## ມາດຕາ 24. ການສິ້ນສຸດການໄກ່ເກ່ຍ

ການໄກ່ເກ່ຍຈະສິ້ນສຸດລົງໃນກໍລະນີດັ່ງຕໍ່ໄປນີ້:

1. ຄູ່ຄວາມສາມາດຕົກລົງກັນໄດ້;
2. ຄູ່ຄວາມຝ່າຍໃດຝ່າຍໜຶ່ງ ຫຼືທັງໝົດບໍ່ເຂົ້າຮ່ວມການໄກ່ເກ່ຍໂດຍບໍ່ມີເຫດຜົນ;
3. ຄູ່ຄວາມບໍ່ສາມາດຕົກລົງກັນໄດ້.

## ມາດຕາ 25. ການໄກ່ເກ່ຍທີ່ບໍ່ສາມາດຕົກລົງກັນໄດ້

ຖ້າການໄກ່ເກ່ຍຫາກຕົກລົງກັນບໍ່ໄດ້ ຄູ່ຄວາມກໍສາມາດຕົກລົງກັນໃຫ້ ສກສ ຫຼື ຫກສ ດຳເນີນການແກ້ໄຂ ໂດຍຄະນະກຳມະການຕັດສິນຂໍ້ຂັດແຍ່ງທາງດ້ານເສດຖະກິດ. ຜູ້ໄກ່ເກ່ຍທີ່ເຮັດໜ້າທີ່ໄກ່ເກ່ຍຂໍ້ຂັດແຍ່ງນັ້ນມາແລ້ວ ແມ່ນບໍ່ໃຫ້ເປັນຄະນະກຳມະການຕັດສິນຂໍ້ຂັດແຍ່ງນັ້ນອີກ.

ໃນກໍລະນີທີ່ຄູ່ຄວາມຫາກບໍ່ເຫັນດີໃຫ້ ສກສ ຫຼື ຫກສ ດຳເນີນການແກ້ໄຂ ໂດຍຄະນະກຳມະການຕັດສິນຂໍ້ຂັດແຍ່ງດັ່ງກ່າວແລ້ວ ພວກກ່ຽວຈະໄປຮ້ອງຟ້ອງຕໍ່ສານປະຊາຊົນກໍໄດ້.

### ມາດຕາ 26. ບົດບັນທຶກຂອງການໄກ່ເກ່ຍ

ບົດບັນທຶກຂອງການໄກ່ເກ່ຍຕ້ອງມີເນື້ອໃນຕົ້ນຕໍດັ່ງນີ້:

1. ວັນ, ເວລາ, ເດືອນ, ປີ, ຊື່ ແລະເລກທີຂອງຂໍ້ຂັດແຍ່ງ ແລະສະຖານທີ່ຂອງການໄກ່ເກ່ຍ;
2. ຊື່ ແລະນາມສະກຸນຂອງຜູ້ໄກ່ເກ່ຍ ແລະຜູ້ບັນທຶກ;
3. ຊື່ ແລະນາມສະກຸນ, ອາຍຸ, ອາຊີບ, ສັນຊາດ ແລະທີ່ຢູ່ຂອງຄູ່ຄວາມ ຫຼືຜູ້ຕາງໜ້າຂອງຄູ່ຄວາມ;
4. ເນື້ອໃນຕົ້ນຕໍຂອງຂໍ້ຂັດແຍ່ງທາງດ້ານເສດຖະກິດ;
5. ຄຳຕົກລົງ, ຂໍ້ສະເໜີຂອງຄູ່ຄວາມ;
6. ຄວາມຮັບຜິດຊອບໃນການໃຊ້ຈ່າຍຄ່າບໍລິການ ແລະຄ່າທຳນຽມຕ່າງໆຂອງຄູ່ຄວາມ ແຕ່ລະຝ່າຍ;
7. ວິທີການຈັດຕັ້ງປະຕິບັດຄຳຕົກລົງຂອງການໄກ່ເກ່ຍ;
8. ລາຍເຊັນຂອງຄູ່ຄວາມ ຫຼື ຜູ້ຕາງໜ້າຂອງຄູ່ຄວາມ, ຂອງຜູ້ໄກ່ເກ່ຍ, ຂອງຜູ້ບັນທຶກ ແລະລາຍເຊັນຂອງຫົວໜ້າ ສກສ ຫຼື ຫກສ ບ່ອນທີ່ດຳເນີນການແກ້ໄຂຂໍ້ຂັດແຍ່ງນັ້ນ.

## ໝວດທີ 3
## ການແກ້ໄຂໂດຍຄະນະກຳມະການຕັດສິນ

### ມາດຕາ 27. ການແຕ່ງຕັ້ງຄະນະກຳມະການຕັດສິນ

ການແຕ່ງຕັ້ງຄະນະກຳມະການຕັດສິນ ຕ້ອງເປັນຈຳນວນຄີກຢູ່ສະເໝີ. ຄະນະກຳມະການຕັດສິນຕ້ອງມີຈຳນວນແຕ່ສາມຄົນຂຶ້ນໄປ ໂດຍອີງຕາມການຕົກລົງເຫັນດີຂອງຄູ່ຄວາມ.

ການເລືອກເອົາຄະນະກຳມະການຕັດສິນ
ແມ່ນໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດ ຕາ 21 ຂອງກົດ ໝາຍສະບັບນີ້.

### ມາດຕາ 28. ການຖອນຕົວ ແລະການຄ້ານຕົວຂອງກຳມະການຕັດສິນ

ການຖອນຕົວ ແລະການຄ້ານຕົວຂອງກຳມະການຕັດສິນ ໃຫ້ປະຕິບັດເຊັ່ນດຽວກັນກັບມາດຕາ 22 ຂອງກົດໝາຍສະບັບນີ້.

### ມາດຕາ 29. ການເກັບກຳຂໍ້ມູນຫຼັກຖານ

ໃນການກະກຽມຕັດສິນຂໍ້ຂັດແຍ່ງທາງດ້ານເສດຖະກິດ ໂດຍຄະນະກຳມະການນັ້ນ ຄະນະກຳມະການຕັດສິນທີ່ໄດ້ຮັບການແຕ່ງຕັ້ງ ຕ້ອງຄົ້ນຄວ້າສຳນວນຄຳຮ້ອງ, ເກັບກຳຂໍ້ມູນ, ຫຼັກຖານ, ຟັງຄຳໃຫ້ການ ຂອງພະຍານ ທີ່ກ່ຽວຂ້ອງໃຫ້ຄົບຖ້ວນ.

ໃນກໍລະນີທີ່ມີຄວາມຈຳເປັນ ຄະນະກຳມະການຕັດສິນຕ້ອງລົງເກັບກຳຂໍ້ມູນ, ຫຼັກຖານກັບທີ່, ເຊີນເອົາຜູ້ຊ່ຽວຊານ, ບຸກຄົນ ຫຼື ອົງການຈັດຕັ້ງທີ່ກ່ຽວຂ້ອງມາໃຫ້ຄວາມກະຈ່າງແຈ້ງ ຫຼື ສິ່ງເອກະສານກ່ຽວກັບ ບັນຫາດັ່ງກ່າວມາໃຫ້ຕົນກໍໄດ້.

ຫຼັງຈາກຄະນະກຳມະການຕັດສິນໄດ້ເກັບກຳຂໍ້ມູນ, ຫຼັກຖານຄົບຖ້ວນແລ້ວ ຕ້ອງເຊີນຄູ່ຄວາມທັງໝົດມາພົບ ເພື່ອອະທິບາຍ ແລະອ້າງເຫດຜົນ, ພະຍານ ແລະຫຼັກຖານທີ່ຕົນມີເປັນຄັ້ງສຸດທ້າຍ.

### ມາດຕາ 30. ກຳນົດເວລາດຳເນີນການຕັດສິນ

ການດຳເນີນການຕັດສິນຂໍ້ຂັດແຍ່ງທາງດ້ານເສດຖະກິດ ໂດຍທົ່ວໄປຕ້ອງໃຫ້ສຳເລັດພາຍໃນສາມເດືອນ ນັບແຕ່ວັນ ສກສ ຫຼື ຫກສ ຕົກລົງຮັບເອົາຄຳຮ້ອງມາພິຈາລະນາແກ້ໄຂເປັນຕົ້ນໄປ. ໃນກໍລະນີທີ່ຂໍ້ຂັດແຍ່ງຫາກມີຄວາມສັບສົນ ການຕັດສິນແມ່ນບໍ່ໃຫ້ກາຍຫົກເດືອນ. ສຳລັບຂໍ້ຂັດແຍ່ງທີ່ຫຍຸ້ງຍາກສັບສົນເປັນພິເສດນັ້ນ ການຕັດສິນຕ້ອງໃຫ້ສຳເລັດຊ້າສຸດບໍ່ໃຫ້ເກີນ ສິບສອງເດືອນນັບແຕ່ວັນທີ່ໄດ້ຮັບຄຳຮ້ອງ ເປັນຕົ້ນໄປ.

ຖ້າການຕັດສິນຫາກບໍ່ສຳເລັດຕາມການກຳນົດເວລາດັ່ງກ່າວ ສກສ ຫຼື ຫກສ ຕ້ອງແຈ້ງໃຫ້ຄູ່ຄວາມຊາບເຫດຜົນຂອງການຊັກຊ້າ.

### ມາດຕາ 31. ມາດຕະການປົກປ້ອງຜົນປະໂຫຍດຂອງຄູ່ຄວາມ

ໃນເວລາດຳເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດນັ້ນ ຄູ່ຄວາມມີສິດຮ້ອງຂໍໃຫ້ຄະນະກຳມະການຕັດສິນຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອສະເໜີໃຫ້ສານປະຊາຊົນອອກຄຳສັ່ງຍຶດຊັບ, ອາຍັດຊັບ ຫຼື ນຳໃຊ້ມາດຕະການອື່ນໆ ເພື່ອແນໃສ່ປົກປ້ອງຜົນປະໂຫຍດຂອງຕົນ. ຖ້າເຫັນວ່າຄຳຮ້ອງນັ້ນມີເຫດຜົນພຽງພໍ ຄະນະກຳມະການຕັດສິນກໍຈະສະເໜີສານປະຊາ ຊົນ ເພື່ອພິຈາລະນາອອກຄຳສັ່ງ ຫຼື ນຳໃຊ້ມາດຕະການຕ່າງໆ ເພື່ອປົກປ້ອງຜົນປະໂຫຍດຂອງ ຄູ່ຄວາມ.

ເມື່ອໄດ້ຮັບຄຳສະເໜີດັ່ງກ່າວ ສານຕ້ອງໄດ້ພິຈາລະນາ ຢ່າງຊ້າບໍ່ໃຫ້ກາຍສິບຫ້າວັນນັບແຕ່ວັນໄດ້ຮັບຄຳສະເໜີເປັນຕົ້ນໄປ.

### ມາດຕາ 32. ສິດໃນການຕົກລົງແກ້ໄຂຂໍ້ຂັດແຍ່ງຂອງຄູ່ຄວາມ

ພາຍຫຼັງທີ່ຄະນະກຳມະການຕັດສິນຂໍ້ຂັດແຍ່ງທາງດ້ານເສດຖະກິດ ຮັບເອົາສຳນວນຂໍ້ຂັດແຍ່ງ ຂອງຄູ່ຄວາມມາພິຈາລະນາແລ້ວ ຄູ່ຄວາມກໍຍັງມີສິດຕົກລົງແກ້ໄຂນຳກັນກ່ອນການຕັດສິນ, ຄຳຕົກລົງຂອງຄູ່ຄວາມນັ້ນ ຕ້ອງເຮັດເປັນລາຍລັກອັກສອນ ໂດຍມີລາຍເຊັນຂອງຄູ່ຄວາມ, ຂອງຄະນະກຳມະການຕັດສິນ ແລະລາຍເຊັນຂອງຫົວໜ້າ ສກສ ຫຼື ຫກສ ບ່ອນທີ່ດຳເນີນການຕັດສິນຂໍ້ຂັດແຍ່ງນັ້ນ.

ຄຳຕົກລົງຂອງຄູ່ຄວາມກ່ອນການຕັດສິນ ມີຜົນສັກສິດຄືກັນກັບຄຳຕັດສິນຂອງຄະນະກຳມະການຕັດສິນ.

**ມາດຕາ 33. ກຳນົດເວລາອອກຄຳຕັດສິນຂອງຄະນະກຳມະການ**

ຄະນະກຳມະການຕັດສິນ ຕ້ອງອອກຄຳຕັດສິນຢ່າງຊ້າບໍ່ໃຫ້ເກີນສິບຫ້າວັນ ນັບແຕ່ວັນສິ້ນສຸດການເກັບກຳຂໍ້ມູນ, ຫຼັກຖານເປັນຕົ້ນໄປ.

**ມາດຕາ 34. ຫຼັກການການຕັດສິນຂອງຄະນະກຳມະການ**

ຄຳຕັດສິນຂອງຄະນະກຳມະການ ຕ້ອງຢູ່ໃນຂອບເຂດຄຳຮ້ອງຂອງຄູ່ຄວາມ. ໃນກໍລະນີທີ່ຄະນະກຳມະການຕັດສິນບໍ່ເປັນເອກະສັນກັນ ການຕັດສິນໃຫ້ຖືເອົາຕາມສຽງສ່ວນຫຼາຍ.

ຄຳຕັດສິນຂອງຄະນະກຳມະການຕ້ອງອ່ານຊ້ອງໜ້າຄູ່ຄວາມທັງໝົດ ແລະມີຜົນສັກສິດນັບແຕ່ ວັນລົງຄຳຕັດສິນເປັນຕົ້ນໄປ.

ຖ້າຄູ່ຄວາມຝ່າຍໃດຝ່າຍໜຶ່ງຫາກບໍ່ມາຕາມໝາຍເຊີນ ໂດຍບໍ່ມີເຫດຜົນ ຄະນະກຳມະການກໍຈະອ່ານຄຳຕັດສິນລັບຫຼັງຄູ່ຄວາມຝ່າຍນັ້ນ ແລ້ວສົ່ງຄຳຕັດສິນດັ່ງກ່າວໃຫ້ຄູ່ຄວາມແຕ່ລະຝ່າຍ. ຄຳຕັດສິນຂອງຄະນະກຳມະການ ມີຜົນສັກສິດນັບແຕ່ວັນທີ່ຄູ່ຄວາມໄດ້ຮັບຊາບຄຳຕັດ ສິນນັ້ນເປັນຕົ້ນໄປ.

**ມາດຕາ 35. ເນື້ອໃນຄຳຕັດສິນຂອງຄະນະກຳມະການ**

ຄຳຕັດສິນຂອງຄະນະກຳມະການມີເນື້ອໃນຕົ້ນຕໍດັ່ງນີ້:

1. ວັນ, ເວລາ, ເດືອນ, ປີ, ຊື່ ແລະເລກທີຂອງຂໍ້ຂັດແຍ່ງ ແລະສະຖານທີ່ພິຈາລະນາອອກຄຳຕັດສິນ;
2. ຊື່ ແລະນາມສະກຸນຂອງຄະນະກຳມະການຕັດສິນ ແລະຜູ້ບັນທຶກ;
3. ຊື່ ແລະນາມສະກຸນ, ອາຍຸ, ອາຊີບ, ສັນຊາດ, ທີ່ຢູ່ຂອງຄູ່ຄວາມ ຫຼືຜູ້ຕາງໜ້າຂອງຄູ່ຄວາມ;
4. ຄຳວິນິດໄສ ແລະບ່ອນອີງຄຳຕັດສິນຂອງຄະນະກຳມະການ;
5. ຄຳຕັດສິນຂອງຄະນະກຳມະການ ແລະມາດຕະການຈັດຕັ້ງປະຕິບັດຄຳຕັດສິນດັ່ງກ່າວ;
6. ຄວາມຮັບຜິດຊອບໃນການໃຊ້ຈ່າຍຄ່າບໍລິການ ແລະຄ່າທຳນຽມຕ່າງໆຂອງຄູ່ຄວາມແຕ່ລະຝ່າຍ;
7. ລາຍເຊັນຂອງຄະນະກຳມະການຕັດສິນທຸກຄົນ, ຜູ້ບັນທຶກ ແລະລາຍເຊັນຂອງຫົວໜ້າ ສກສ ຫຼື ຫກສ ບ່ອນທີ່ດຳເນີນການຕັດສິນຂໍ້ຂັດແຍ່ງນັ້ນ.

**ມາດຕາ 36. ການດັດແກ້ຄຳຕັດສິນຂອງຄະນະກຳມະການ**

ຄຳຕັດສິນຂອງຄະນະກຳມະການ ຈະດັດແກ້ຕາມຄຳຮ້ອງຂໍຂອງຄູ່ຄວາມຝ່າຍໃດຝ່າຍໜຶ່ງ ຫຼື ທັງໝົດໄດ້ ກໍຕໍ່ເມື່ອຫາກມີຂໍ້ຜິດພາດທາງດ້ານການຄິດໄລ່ ຫຼື ການພິມ ຊຶ່ງບໍ່ປ່ຽນແປງເນື້ອໃນຄຳຕັດສິນຂອງຄະນະກຳມະການ. ຄຳຮ້ອງຂໍໃຫ້ດັດແກ້ຄຳຕັດສິນຂອງຄະນະກຳມະການ ໃຫ້ຍື່ນຕໍ່ ສກສ ຫຼື ຫກສ ບ່ອນທີ່ອອກຄຳຕັດ

ສິນຂອງຄະນະກຳມະການນັ້ນ ພາຍໃນກຳນົດເວລາສິບຫ້າວັນ ນັບແຕ່ວັນທີ່ຄູ່ຄວາມໄດ້ຮັບຊາບເປັນຕົ້ນໄປ.

ການພິຈາລະນາຄຳຮ້ອງຂໍໃຫ້ດັດແກ້ຄຳຕັດສິນຂອງຄະນະກຳມະການນັ້ນ ຕ້ອງດຳເນີນ ໃຫ້ສຳເລັດພາຍໃນກຳນົດສິບຫ້າວັນ ນັບແຕ່ວັນທີ່ໄດ້ຮັບຄຳຮ້ອງເປັນຕົ້ນໄປ.

## ພາກທີ IV
## ການປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

### ມາດຕາ 37. ຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດປະກອບດ້ວຍ:

1. ຄຳຕົກລົງຂອງການໄກ່ເກ່ຍ;
2. ຄຳຕົກລົງຂອງຄູ່ຄວາມກ່ອນການຕັດສິນຂອງຄະນະກຳມະການ;
3. ຄຳຕັດສິນຂອງຄະນະກຳມະການ.

### ມາດຕາ 38. ພັນທະຂອງຄູ່ຄວາມ

ຄູ່ຄວາມມີພັນທະປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພາຍໃນກຳນົດສິບຫ້າວັນ ນັບແຕ່ວັນທີ່ໄດ້ມີຄຳຕົກລົງເປັນຕົ້ນໄປ ຫຼື ນັບແຕ່ວັນທີ່ຄູ່ຄວາມທັງໝົດ ໄດ້ຮັບຊາບຄຳຕັດສິນຂອງຄະນະກຳມະການເປັນຕົ້ນໄປ ໃນກໍລະນີທີ່ຄູ່ຄວາມຝ່າຍໃດຝ່າຍໜຶ່ງບໍ່ໄດ້ເຂົ້າຮ່ວມໃນການຕັດສິນ.

### ມາດຕາ 39. ສິດຂອງຜູ້ອັບປະໂຫຍດ

ຄູ່ຄວາມຝ່າຍທີ່ໄດ້ຮັບຄວາມອັບປະໂຫຍດ ຈາກການບໍ່ປະຕິບັດຜົນຂອງການແກ້ໄຂຂໍ້ຂັດ ແຍ່ງທາງດ້ານເສດຖະກິດນັ້ນ ມີສິດຮ້ອງຂໍຕໍ່ສານປະຊາຊົນພິຈາລະນາອອກຄຳຊີ້ຂາດ ເພື່ອເຮັດ ໃຫ້ຜົນຂອງການແກ້ໄຂຂໍ້ຂັດແຍ່ງດັ່ງກ່າວ ມີຜົນບັງຄັບປະຕິບັດ.

### ມາດຕາ 40. ການຢັ້ງຢືນຂອງສານປະຊາຊົນ

ເມື່ອໄດ້ຮັບຄຳຮ້ອງຂໍຂອງຄູ່ຄວາມແລ້ວ ສານປະຊາຊົນຕ້ອງພິຈາລະນາອອກຄຳຊີ້ຂາດຢ່າງຊ້າບໍ່ກາຍສາມສິບວັນ ນັບແຕ່ວັນທີ່ໄດ້ຮັບຄຳຮ້ອງຂໍເປັນຕົ້ນໄປ. ສານພຽງແຕ່ຈະກວດເບິ່ງວ່າການດຳເນີນການແກ້ໄຂຂໍ້ຂັດແຍ່ງນັ້ນ ໄດ້ປະຕິບັດຖືກຕ້ອງຕາມຂໍ້ກຳນົດກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ທີ່ນຳມາໃຊ້ນັ້ນ ຫຼື ບໍ່ ແລະກວດເບິ່ງຄວາມຖືກຕ້ອງດ້ານລະບຽບກົດໝາຍກ່ຽວກັບຄວາມໝັ້ນຄົງ, ຄວາມສະຫງົບ ແລະຄວາມເປັນລະບຽບຮຽບຮ້ອຍຂອງສັງ ຄົມເທົ່ານັ້ນ. ຖ້າເຫັນວ່າຖືກຕ້ອງແລ້ວ ສານປະຊາຊົນກໍຈະລົງຄຳຊີ້ຂາດຢັ້ງຢືນເອົາ ແລະມີຜົນບັງຄັບປະຕິບັດ. ຄູ່ຄວາມບໍ່ມີສິດຂໍອຸທອນ ເວັ້ນເສັຍແຕ່ ຄຳຊີ້ຂາດຂອງສານປະຊາຊົນນັ້ນ ຫາກ ໄດ້ຢັ້ງຢືນເອົາຜົນຂອງການແກ້ໄຂຂໍ້ຂັດ

ແຍ່ງທາງດ້ານເສດຖະກິດ ທີ່ຜິດພາດ ຫຼື ຄຳຊີ້ຂາດຂອງ ສານປະຊາຊົນນັ້ນ ຫາກບໍ່ກົງກັບຄຳຕົກລົງ ຂອງຄູ່ຄວາມ ຫຼື ຄຳຕັດສິນຂອງຄະນະກຳມະການ.

ໃນກໍລະນີທີ່ສານປະຊາຊົນເຫັນວ່າ ຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຫາກໄດ້ລະເມີດລະບຽບກົດໝາຍທີ່ໄດ້ກ່າວມາວັກເທິງນີ້ ສານກໍຈະບໍ່ລົງຄຳຊີ້ຂາດຢັ້ງຢືນເອົາ. ຄູ່ຄວາມມີສິດຕົກລົງໃຫ້ ສກສ ຫຼື ຫກສ ແກ້ໄຂຄືນໃໝ່ ຫຼືໄປຍື່ນຄຳຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອດຳເນີນການ ຕາມຂະບວນການຍຸຕິທຳ.

**ມາດຕາ 41. ການຈັດຕັ້ງປະຕິບັດຄຳຕັດສິນຂອງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງຕ່າງປະເທດ ຫຼືຂອງສາກົນ**

ພາຍຫຼັງທີ່ໄດ້ຮັບຄຳຕັດສິນຂອງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງຕ່າງປະເທດ ຫຼືຂອງສາກົນແລ້ວ ສກສ ຕ້ອງຄົ້ນຄວ້າ. ຖ້າເຫັນວ່າຄຳຕັດສິນນັ້ນຫາກຢູ່ໃນສິດ ແລະ ໜ້າທີ່ຂອງ ສປປ ລາວ ໃນຖານະທີ່ເປັນພາຄີຂອງສົນທິສັນຍາສາກົນ ກ່ຽວກັບການແກ້ໄຂຂໍ້ຂັດ ແຍ່ງທາງດ້ານເສດຖະກິດ ແລະຄຳຕັດສິນດັ່ງກ່າວ ສອດຄ່ອງກັບກົດໝາຍຂອງ ສປປ ລາວ ແລ້ວ ສກສ ກໍຮຽກຄູ່ຄວາມເຂົ້າມາເພື່ອ ແນະນຳໃຫ້ປະຕິບັດ.

ໃນກໍລະນີທີ່ຄູ່ຄວາມບໍ່ປະຕິບັດ ສກສ ຕ້ອງແຈ້ງໃຫ້ຄູ່ຄວາມອີກຝ່າຍໜຶ່ງຊາບ. ຄູ່ຄວາມ ຝ່າຍທີ່ໄດ້ຮັບຄວາມເສັຍປະໂຫຍດນັ້ນ ກໍມີສິດຮ້ອງຂໍຕໍ່ສານປະຊາຊົນແຫ່ງ ສປປລາວ ເພື່ອພິຈາ ລະນາອອກຄຳຊີ້ຂາດ ເພື່ອເຮັດໃຫ້ຄຳຕັດສິນນັ້ນມີຜົນບັງຄັບປະຕິບັດ.

ຖ້າເຫັນວ່າ ຄຳຕັດສິນຂອງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂອງຕ່າງປະເທດ ຫຼື ຂອງສາກົນ ຫາກຂັດກັບກົດໝາຍຂອງ ສປປ ລາວ ແລ້ວ ສກສ ກໍຈະບໍ່ຮັບມາພິຈາລະນາ ແລະສົ່ງຄຳຕັດສິນນັ້ນ ພ້ອມດ້ວຍເຫດຜົນຄືນໃຫ້ອົງການດັ່ງກ່າວ.

## ພາກທີ V
## ຄ່າໃຊ້ຈ່າຍໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

**ມາດຕາ 42. ຄ່າໃຊ້ຈ່າຍໃນການດຳເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ຄ່າໃຊ້ຈ່າຍໃນການດຳເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ປະກອບດ້ວຍ:

1. ຄ່າໃຊ້ຈ່າຍໃນການບໍລິການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
2. ຄ່າທຳນຽມ.

**ມາດຕາ 43. ຄ່າໃຊ້ຈ່າຍໃນການບໍລິການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ຄ່າໃຊ້ຈ່າຍໃນການບໍລິການ ແມ່ນຄ່າໃຊ້ຈ່າຍໃນການເຄື່ອນໄຫວການໄກ່ເກັ່ຍ ຫຼືການຕັດສິນຂອງຄະນະກຳມະການເຊັ່ນ: ຄ່າແຮງງານຂອງຜູ້ໄກ່ເກັ່ຍ ຫຼືຂອງຄະນະກຳມະການຕັດສິນ; ຄ່າໃຊ້ຈ່າຍໃຫ້ຜູ້ຊ່ຽວຊານທີ່ໄດ້ທຳການພິສູດບັນຫາໃດໜຶ່ງ, ຄ່າໃຊ້ຈ່າຍໃຫ້ພະຍານ ແລະຄ່າໃຊ້ຈ່າຍອື່ນໆ ທີ່ມີການ ພົວພັນກັບວຽກງານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດນັ້ນ.

ເພື່ອຄວາມສະດວກໃນການດຳເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດນັ້ນ ໃຫ້ຄູ່ຄວາມຝ່າຍໃດຝ່າຍໜຶ່ງ ຫຼື ທັງໝົດ ວາງເງິນຄ່າໃຊ້ຈ່າຍໃນການບໍລິການໃຫ້ ສກສ ຫຼື ຫກສ ຈຳນວນໜຶ່ງກ່ອນ ຕາມລະບຽບການ. ໃນກໍລະນີເງິນທີ່ໄດ້ວາງນັ້ນ ຫາກບໍ່ພຽງພໍກໍໃຫ້ວາງຕື່ມ, ຖ້າເຫຼືອແມ່ນໃຫ້ສົ່ງຄືນແກ່ຜູ່ວາງ.

ໃນກໍລະນີທີ່ການແກ້ໄຂຂໍ້ຂັດແຍ່ງ ຫາກສິ້ນສຸດລົງໂດຍບໍ່ມີການຕົກລົງ ຫຼື ບໍ່ມີການຕັດສິນຍ້ອນຄູ່ຄວາມບໍ່ໄດ້ເຂົ້າຮ່ວມ, ເງິນທີ່ຄູ່ຄວາມໄດ້ວາງໃຫ້ ສກສ ຫຼື ຫກສ ຊຶ່ງໄດ້ໃຊ້ຈ່າຍໃນການເຄື່ອນໄຫວບໍລິການໄປແລ້ວນັ້ນ ຄູ່ຄວາມບໍ່ມີສິດທວງເອົາຄືນ, ຄູ່ຄວາມຝ່າຍທີ່ບໍ່ໄດ້ເຂົ້າຮ່ວມຕາມໝາຍເຊີນຂອງ ສກສ ຫຼື ຫກສ ໂດຍບໍ່ມີເຫດຜົນນັ້ນ ຕ້ອງເປັນຜູ່ຮັບຜິດຊອບ.

ລາຍລະອຽດກ່ຽວກັບຄ່າໃຊ້ຈ່າຍໃນການບໍລິການໄດ້ກຳນົດໄວ້ຕ່າງຫາກ.

### ມາດຕາ 44. ຄ່າທຳນຽມ

ຄ່າທຳນຽມ ແມ່ນພັນທະຂອງຜູ່ນຳໃຊ້ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ທີ່ຕ້ອງມອບເຂົ້າງົບປະມານແຫ່ງລັດ.

ການເກັບຄ່າທຳນຽມໃຫ້ປະຕິບັດດັ່ງນີ້:

+ ຂໍ້ຂັດແຍ່ງທີ່ມີມູນຄ່າບໍ່ເກີນ ຊາວລ້ານກີບ ໃຫ້ເກັບ ສອງແສນກີບ;
+ ຂໍ້ຂັດແຍ່ງທີ່ມີມູນຄ່າ ຊາວລ້ານໜຶ່ງກີບ ຮອດ ສີ່ສິບລ້ານກີບ ໃຫ້ເກັບ ສີ່ແສນກີບ;
+ ຂໍ້ຂັດແຍ່ງທີ່ມີມູນຄ່າ ສີ່ສິບລ້ານໜຶ່ງກີບ ຮອດ ເຈັດສິບລ້ານກີບ ໃຫ້ເກັບຫົກແສນກີບ;
+ ຂໍ້ຂັດແຍ່ງທີ່ມີມູນຄ່າ ເຈັດສິບລ້ານໜຶ່ງກີບ ຮອດ ຮ້ອຍລ້ານກີບ ໃຫ້ເກັບ ແປດແສນກີບ;
+ ຂໍ້ຂັດແຍ່ງທີ່ມີມູນຄ່າສູງກວ່າ ຮ້ອຍລ້ານກີບ ໃຫ້ເກັບ ໜຶ່ງລ້ານກີບ.

ຖ້າເປັນເງິນຕາຕ່າງປະເທດ ໃຫ້ຄິດໄລ່ເປັນເງິນກີບຕາມອັດຕາແລກປ່ຽນຂອງທະນາຄານແຫ່ງລັດ ທີ່ໄດ້ກຳນົດອອກໃນມື້ນັ້ນ.

ໃນການຈ່າຍຄ່າທຳນຽມ ຄູ່ຄວາມຕ້ອງຈ່າຍພາຍຫຼັງທີ່ ສກສ ຫຼື ຫກສ ໄດ້ດຳເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດແລ້ວ.

ໃນການໄກ່ເກັ່ຍ ຖ້າຄູ່ຄວາມບໍ່ໄດ້ຕົກລົງໄວ້ຢ່າງອື່ນ ໃຫ້ຄູ່ຄວາມເສຍຄ່າທຳນຽມຝ່າຍລະເຄິ່ງ.

ໃນການຕັດສິນໂດຍຄະນະກຳມະການນັ້ນ ຕາມຫຼັກການແລ້ວແມ່ນຝ່າຍທີ່ເສຍເປັນຜູ່ຈ່າຍ, ແຕ່ຄະນະກຳມະການຕັດສິນແບ່ງປັນໃຫ້ຄູ່ຄວາມແຕ່ລະຝ່າຍ ເປັນຜູ່ຈ່າຍຮ່ວມກັນ ຕາມຄວາມເໝາະສົມ.

## ພາກທີ VI
## ການຄຸ້ມຄອງ ແລະການກວດກາ
## ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

### ມາດຕາ 45. ອົງການຄຸ້ມຄອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ອົງການຄຸ້ມຄອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ປະກອບດ້ວຍ:

- ກະຊວງຍຸຕິທຳ;
- ພະແນກຍຸຕິທຳແຂວງ, ນະຄອນ ແລະເຂດພິເສດ.

**ມາດຕາ 46. ສິດ ແລະໜ້າທີ່ຂອງກະຊວງຍຸຕິທຳ**

ໃນການຄຸ້ມຄອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ກະຊວງຍຸຕິທຳມີສິດ ແລະ ໜ້າທີ່ດັ່ງນີ້:

1. ຄົ້ນຄວ້າ ສ້າງແຜນຍຸທະສາດ, ແຜນການ, ລະບຽບກົດໝາຍກ່ຽວກັບວຽກງານແກ້ໄຂ ຂໍ້ຂັດແຍ່ງທາງດ້ານເສດຖະກິດເພື່ອສະເໜີໃຫ້ລັດຖະບານ ພິຈາລະນາ, ຕົກລົງ;
2. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະແຈ້ງການ ກ່ຽວກັບວຽກງານການແກ້ໄຂຂໍ້ ຂັດແຍ່ງທາງດ້ານເສດຖະກິດ;
3. ຊີ້ນຳ ແລະຄຸ້ມຄອງຕາມສາຍຕັ້ງ ກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະ ກິດ ໂດຍປະສານສົມທົບກັບຂະແໜງການ ແລະອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;
4. ຄຸ້ມຄອງດ້ານການຈັດຕັ້ງ, ງົບປະມານ, ກວດກາການຈັດຕັ້ງປະຕິບັດວຽກງານຂອງ ສກສ;
5. ປ່ຽນແປງ, ໂຈະ, ຍົກເລີກ, ລຶບລ້າງຄຳສັ່ງ, ແຈ້ງການ ຫຼື ນິຕິກຳອື່ນໆຂອງ ສກສ ແລະ ຫກສ ຫຼື ສະເໜີໃຫ້ອົງການທີ່ກ່ຽວຂ້ອງ ຍົກເລີກນິຕິກຳຂອງຂະແໜງການອື່ນ ທີ່ຂັດ ກັບລະບຽບກົດໝາຍ ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
6. ກໍ່ສ້າງ, ບຳລຸງ ແລະຍົກລະດັບຄວາມຮູ້ຄວາມສາມາດ, ຄຸນສົມບັດ,ຈັນຍາທຳ, ວິຊາ ສະເພາະ ແລະແບບແຜນວິທີເຮັດວຽກ ໃຫ້ພະນັກງານ, ຜູ້ໄກ່ເກັ່ຍ ແລະກຳມະການ ຕັດສິນຂອງ ສກສ ແລະ ຫກສ;
7. ສະເໜີໃຫ້ນາຍົກລັດຖະມົນຕີແຕ່ງຕັ້ງ, ປົດຕຳແໜ່ງ ຫຼືຍົກຍ້າຍ ຫົວໜ້າ ສກສ ໂດຍປະສານ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
8. ແຕ່ງຕັ້ງ, ປົດຕຳແໜ່ງ ຫຼືຍົກຍ້າຍ ຮອງຫົວໜ້າ ສກສ, ຫົວໜ້າ ແລະຮອງຫົວໜ້າ ຫກສ ໂດຍ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
9. ແຕ່ງຕັ້ງ ຫຼືປົດຕຳແໜ່ງຜູ້ໄກ່ເກັ່ຍ ຫຼືກຳມະການຕັດສິນ ບົນພື້ນຖານການສະເໜີຂອງ ສກສ;
10. ປະຕິບັດນະໂຍບາຍຕໍ່ພະນັກງານຜູ້ທີ່ມີຜົນງານ ແລະ ປະຕິບັດວິໄນຕໍ່ຜູ້ທີ່ມີຄວາມ ຜິດ ໃນການຈັດຕັ້ງປະຕິບັດການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໂດຍປະສານ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
11. ພົວພັນກັບຕ່າງປະເທດກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
12. ສະຫຼຸບ, ປະເມີນຜົນ ແລະລາຍງານການເຄື່ອນໄຫວວຽກງານແກ້ໄຂຂໍ້ຂັດແຍ່ງທາງ ດ້ານເສດຖະກິດໃຫ້ລັດຖະບານ;
13. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 47. ສິດ ແລະໜ້າທີ່ຂອງພະແນກຍຸຕິທຳແຂວງ, ນະຄອນ ແລະເຂດພິເສດ**

ໃນການຄຸ້ມຄອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພະແນກຍຸຕິທຳແຂວງ, ນະຄອນ ແລະເຂດພິເສດມີສິດ ແລະໜ້າທີ່ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍແຜນຍຸທະສາດ, ແຜນການ, ລະບຽບກົດໝາຍກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ທີ່ຂັ້ນເທິງວາງອອກ;
2. ຊີ້ນຳ ຫກສ ສ້າງ ແລະປະຕິບັດແຜນການວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຢູ່ໃນທ້ອງຖິ່ນຂອງຕົນ;
3. ຄຸ້ມຄອງດ້ານການຈັດຕັ້ງ, ງົບປະມານ ແລະ ກວດກາການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງ ຫກສ;
4. ສະເໜີຕໍ່ກະຊວງຍຸຕິທຳ ກ່ຽວກັບການສ້າງຕັ້ງ ແລະປັບປຸງຫ້ອງການ, ການແຕ່ງຕັ້ງ, ປົດຕຳ ແໜ່ງ, ຍົກຍ້າຍຫົວໜ້າ, ຮອງຫົວໜ້າ ຫກສ ໂດຍປະສານສົມທົບກັບ ສກສ ແລະພາກສ່ວນທີ່ ກ່ຽວຂ້ອງ;
5. ຊີ້ນຳວຽກງານຄົ້ນຄວ້າຄຳຮ້ອງທຸກຂອງປະຊາຊົນ ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງ ຫກສ;
6. ຍ້ອງຍໍພະນັກງານຜູ່ທີ່ມີຜົນງານ ແລະປະຕິບັດວິໄນຕໍ່ພະນັກງານຜູ່ມີຄວາມຜິດ ຂອງ ຫກສ ໃນການຈັດຕັ້ງປະຕິບັດການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໂດຍປະສານສົມທົບກັບພາກ ສ່ວນທີ່ກ່ຽວຂ້ອງ;
7. ສະຫຼຸບ, ປະເມີນຜົນ ແລະລາຍງານການເຄື່ອນໄຫວວຽກງານຂອງ ຫກສ ໃຫ້ກະຊວງຍຸຕິທຳ;
8. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 48. ອົງການກວດກາການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ອົງການກວດກາການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນອົງການດຽວກັນກັບອົງການຄຸ້ມຄອງທີ່ໄດ້ກຳນົດໄວ້ໃນມາດຕາ 45 ຂອງກົດໝາຍສະບັບນີ້.

**ມາດຕາ 49. ສິດ ແລະໜ້າທີ່ໃນການກວດກາຂອງກະຊວງຍຸຕິທຳ**

ໃນການກວດກາການເຄື່ອນໄຫວ ແລະການຈັດຕັ້ງປະຕິບັດໜ້າທີ່ວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ກະຊວງຍຸຕິທຳ ມີສິດ ແລະໜ້າທີ່ດັ່ງນີ້:

1. ກວດກາການຈັດຕັ້ງປະຕິບັດແຜນຍຸດທະສາດ, ແຜນການ, ລະບຽບກົດໝາຍ, ສະພາບການ ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງ ສກສ;
2. ກວດກາຄຳຮ້ອງທຸກຂອງປະຊາຊົນ ກ່ຽວກັບການແກ້ໄຂຂໍ້ແຍ່ງທາງດ້ານເສດຖະກິດຂອງ ສກສ;
3. ກວດກາການຄຸ້ມຄອງ ຫກສ ຂອງພະແນກຍຸຕິທຳ;
4. ປະຕິບັດສິດ ແລະໜ້າທີ່ອື່ນໆ ທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 50. ສິດ ແລະໜ້າທີ່ໃນການກວດກາຂອງພະແນກຍຸຕິທຳ**

ໃນການກວດກາການຈັດຕັ້ງປະຕິບັດໜ້າທີ່ຂອງ ທກສ ນັ້ນ ພະແນກຍຸຕິທຳແຂວງ, ນະຄອນ ແລະເຂດພິເສດ ມີສິດ ແລະໜ້າທີ່ດັ່ງນີ້:

1. ກວດກາການເຄື່ອນໄຫວວຽກງານຂອງ ທກສ ໃນການຈັດຕັ້ງປະຕິບັດແຜນຍຸດທະສາດ, ແຜນການ, ລະບຽບກົດໝາຍ ແລະສະພາບການກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
2. ກວດກາຄຳຮ້ອງທຸກຂອງປະຊາຊົນກ່ຽວກັບການແກ້ໄຂຂໍ້ແຍ່ງທາງດ້ານເສດຖະກິດຂອງ ທກສ;
3. ປະຕິບັດສິດ ແລະໜ້າທີ່ອື່ນໆ ທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ພາກທີ VII
## ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະມາດຕະການຕໍ່ຜູ້ລະເມີດ

### ມາດຕາ 51. ນະໂຍບາຍຕໍ່ຜູ້ທີ່ມີຜົນງານ

ຜູ້ໄກ່ເກ່ຍ ຫຼືຄະນະກຳມະການຕັດສິນ ລວມທັງພະນັກງານຂອງ ສກສ ຫຼື ທກສ ຜູ້ທີ່ມີຜົນງານດີເດັ່ນ ຈະໄດ້ຮັບການຍ້ອງຍໍ ຫຼືການປະຕິບັດນະໂຍບາຍອື່ນໆ ຕາມຄວາມເໝາະສົມ.

### ມາດຕາ 52. ມາດຕະການຕໍ່ຜູ້ລະເມີດ

ພະນັກງານ ສກສ ຫຼື ທກສ ທີ່ມີຄວາມຜິດໃນການປະຕິບັດໜ້າທີ່ຂອງຕົນ ເຊັ່ນ: ສວຍໃຊ້ໜ້າທີ່, ໃຊ້ອຳນາດເກີນຂອບເຂດ, ຮັບສິນບົນ ຈະຖືກສຶກສາອົບຮົມ, ປະຕິບັດວິໄນ ຫຼື ລົງໂທດຕາມລະບຽບກົດໝາຍ.

ຜູ້ໄກ່ເກ່ຍ ຫຼືຄະນະກຳມະການຕັດສິນ ທີ່ມີຄວາມຜິດໂດຍເຈດຕະນາໃນການປະຕິບັດໜ້າທີ່ຂອງຕົນ ເຊັ່ນ: ສວຍໃຊ້ໜ້າທີ່, ຮັບສິນບົນ ແລະອື່ນໆ ຈະຖືກສຶກສາອົບຮົມ, ໃນກໍລະນີໜັກ ຈະຖືກປົດອອກຈາກບັນຊີລາຍຊື່ຂອງຜູ້ໄກ່ເກ່ຍ ຫຼື ກຳມະການຕັດສິນຂອງ ສກສ ຫຼື ຈະຖືກລົງໂທດຕາມລະບຽບກົດໝາຍ.

ຄູ່ຄວາມຝ່າຍໃດຝ່າຍໜຶ່ງ ຫຼື ຄູ່ຄວາມທັງໝົດ ຫາກບໍ່ໃຫ້ຄວາມຮ່ວມມື ຫຼື ລະເມີດຕໍ່ຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ທີ່ໃຊ້ໄດ້ເດັດຂາດແລ້ວ ຈະຖືກສຶກສາອົບຮົມ ຫຼື ລົງໂທດຕາມລະບຽບກົດໝາຍ.

## ພາກທີ VIII
## ງົບປະມານ, ເຄື່ອງໝາຍ ແລະ ຕາປະທັບ

### ມາດຕາ 53. ງົບປະມານ

ງົບປະມານໃນການເຄື່ອນໄຫວວຽກງານຂອງ ສກສ ແລະ ທກສ ປະຕິບັດດັ່ງນີ້:

- ງົບປະມານຂອງ ສກສ ຂຶ້ນກັບກະຊວງຍຸຕິທຳ;
- ງົບປະມານຂອງ ທກສ ຂຶ້ນກັບແຂວງ, ນະຄອນ ຫຼືເຂດພິເສດ ທີ່ ທກສ ຕັ້ງຢູ່.

**ມາດຕາ 54. ເຄື່ອງໝາຍ**

ເຄື່ອງໝາຍຂອງ ສກສ ແລະ ຫກສ ເປັນຮູບກາຊິງຊັ່ງຢູ່ໃນຮູບວົງມົນ.

**ມາດຕາ 55. ຕາປະທັບ**

ສກສ ແລະ ຫກສ ມີຕາປະທັບຂອງຕົນ ເພື່ອນຳໃຊ້ເຂົ້າໃນວຽກງານທາງລັດຖະການ.

## ພາກທີ IX
## ບົດບັນຍັດສຸດທ້າຍ

**ມາດຕາ 56. ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສປປ ລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 57. ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດພາຍຫຼັງຫົກສິບວັນ ນັບແຕ່ວັນປະທານປະເທດແຫ່ງ ສປປ ລາວ ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**